# ຜົນປະໂຫຍດການປະກັນໄພຫວ່າງງານຂອງທ່ານ ຖືກກຳນົດແນວໃດ



## ໄລຍະໃຊ້ເປັນຖານຄິດໄລ່ຂອງທ່ານ

ຈຳນວນ "ເງິນ" ຂອງການຂໍເອົາເງິນປະກັນການຫວ່າງງານ (UI)—ທ່ານສາມາດໄດ້ຮັບເງິນຫລາຍປານໃດ ຖ້າທ່ານມີເງື່ອນໄຂຄົບຖ້ວນຕາມຂໍ້ກຳນົດຂອງການມີສິດໄດ້ຮັບເງິນ—ແມ່ນຖືກກຳນົດໂດຍລາຍໄດ້ທີ່ຈ່າຍໃຫ້ທ່ານໃນໄລຍະເວລາສູງເຖິງ 52 ອາທິດ ຕາມການກຳ ນົດຂອງກົດໝາຍລັດ Massachusetts. ສິ່ງນີ້ເອີ້ນວ່າ "ໄລຍະໃຊ້ເປັນຖານຄິດໄລ່" ຂອງທ່ານ.

## ໄລຍະໃຊ້ເປັນຖານຄິດໄລ່ຂອງທ່ານຖືກກຳນົດຄືແນວໃດ

"ໄລຍະໃຊ້ເປັນຖານຄິດໄລ່ຕົ້ນຕໍ" – ເຊິ່ງແມ່ນໄລຍະທີ່ປະກອບມີອາທິດທີ່ເຮັດວຽກທີ່ຖືກນຳໃຊ້ເພື່ອຄິດໄລ່ການຂໍເອົາເງິນປະກັນໄພຫວ່າງງານ ເປັນສິ່ງທຳອິດ–ແມ່ນສີ່ໄຕມາດສຸດທ້າຍທີ່ເຮັດໄປແລ້ວຕາມເວລາປະຕິ ທິນ ກ່ອນວັນທີທີ່ການຂໍເງິນປະກັນຂອງທ່ານມີຜົນບັງຄັບໃຊ້. ທ່ານສາມາດດຳເນີນການຂໍເອົາເງິນປະກັນໄພຫວ່າງງານໂດຍອີງໃສ່ "ໄລຍະໃຊ້ເປັນຖານທາງເລືອກ" ພາຍໃຕ້ສະພາບການສະເພາະໃດໜຶ່ງທີ່ລະບຸໄວ້ໃນກົດໝາຍ.

ເມື່ອມີການນຳໃຊ້ໄລຍະໃຊ້ເປັນຖານຄິດໄລ່ທາງອື່ນແທນ, ການຂໍເອົາເງິນປະກັນຂອງທ່ານຈະຖືກກຳນົດໂດຍອີງໃສ່ຄ່າຈ້າງທີ່ຈ່າຍໃຫ້ທ່ານໃນໄລຍະສາມໄຕມາດຫລ້າສຸດ ບວກກັບໄລຍະເວລາລະຫວ່າງໄຕມາດສຸດທ້າຍ ຫາວັນທີມີຜົນນຳໃຊ້ຂອງການຂໍເອົາເງິນປະກັນຂອງທ່ານ. (ເບິ່ງຕາມຕາຕະລາງຢູ່ດ້ານຫຼັງຂອງໜ້ານີ້.)

## ປີການຮັບຜົນປະໂຫຍດຂອງທ່ານ

ເພື່ອໃຫ້ເຂົ້າໃຈຂັ້ນຕອນນີ້, ທ່ານຕ້ອງຮູ້ວ່າເງິນຜົນປະໂຫຍດຂອງທ່ານຖືກກຳນົດແນວໃດ. ເມື່ອມີການກຳນົດການຂໍເງິນປະກັນໄພຫວ່າງງານຂອງທ່ານ, "ເງິນຜົນປະໂຫຍດທີ່ຈະໄດ້ຮັບ" ຈະຖືກຄິດໄລ່. ເງິນຜົນປະໂຫຍດທີ່ຈະໄດ້ຮັບແມ່ນຈຳນວນເງິນທັງໝົດຂອງຜົນປະໂຫຍດທີ່ທ່ານອາດຈະໄດ້ຮັບໃນຊ່ວງ "ປີການໄດ້ຮັບຜົນປະໂຫຍດ" ຂອງທ່ານ ຖ້າທ່ານມີເງື່ອນໄຂຄົບຖ້ວນຕາມຂໍ້ກຳນົດຂອງການມີສິດໄດ້ຮັບເງິນຫວ່າງງານຕາມກົດໝາຍ.

"ປີການໄດ້ຮັບຜົນປະໂຫຍດ" ຂອງທ່ານແມ່ນ 52 ອາທິດ ນັບຈາກວັນທີທີ່ການຂໍເອົາເງິນປະກັນຂອງທ່ານມີຜົນບັງຄັບໃຊ້.

"ອັດຕາເງິນຜົນປະໂຫຍດ" – ຈຳນວນເງິນຜົນປະໂຫຍດປະຈຳອາທິດຂອງທ່ານ – ຍັງຖືກຄິດໄລ່ນຳອີກ. ມັນອີງໃສ່ຄ່າຈ້າງສະເລ່ຍປະຈຳອາ ທິດຂອງທ່ານໃນລະຫວ່າງສອງໄຕມາດທີ່ໄດ້ຮັບເງິນສູງສຸດຂອງທ່ານ. ມາຮອດວັນທີ 2 ຕຸລາ 2022 ອັດຕາເງິນຜົນປະໂຫຍດສູງສຸດຂອງທ່ານແມ່ນ $1015 ຕໍ່ອາທິດ.

"ໄລຍະເວລາການໄດ້ຮັບຜົນປະໂຫຍດ" – ຈຳນວນອາທິດສູງສຸດທີ່ທ່ານມີສິດໄດ້ຮັບເງິນຜົນປະໂຫຍດການຫວ່າງງານ– ຖືກກຳນົດໂດຍການເອົາເງິນຜົນປະໂຫຍດທີ່ຈະໄດ້ຮັບຫານໃຫ້ອັດຕາເງິນຜົນປະໂຫຍດ.ຈຳ ນວນອາທິດສູງສຸດທີ່ຜູ້ຂໍເງິນປະກັນສາມາດໄດ້ກັບເງິນຜົນປະໂຫຍດ ປະກັນການຫວ່າງງານປົກກະຕິແມ່ນ 30 ອາທິດ.

ຂໍ້ມູນກ່ຽວກັບການມີສິດໄດ້ຮັບເງິນຂອງທ່ານ – ຈຳນວນເງິນທັງໝົດທີ່ ທ່ານມີສິດໄດ້ຮັບ ຖ້າທ່ານມີເງື່ອນໄຂຄົບຕາມທຸກຂໍ້ກຳນົດດ້ານການມີສິດໄດ້ຮັບເງິນຫວ່າງງານ – ຈະຖືກສົ່ງໃຫ້ທ່ານທາງໄປສະນີ.

## ຄ່າຈ້າງໃນໄລຍະໃຊ້ເປັນຖານຂອງທ່ານຖືກກຳນົດແນວໃດ

ນາຍຈ້າງລັດ Massachusetts ຕ້ອງໄດ້ແຈ້ງຂໍ້ມູນກ່ຽວກັບຄ່າຈ້າງໃຫ້ແກ່ພະແນກອາກອນລາຍໄດ້ຂອງລັດຢ່າງຊ້າບໍ່ໃຫ້ກາຍ 30 ວັນຫຼັງ ຈາກ ສິ້ນສຸດແຕ່ລະໄຕມາດຕາມເວລາປະຕິທິນ. ນີ້ໝາຍຄວາມວ່າຄ່າຈ້າງຈະຖືກແຈ້ງໃນເດືອນເມສາ, ເດືອນກໍລະກົດ, ເດືອນຕຸລາ, ແລະເດືອນມັງກອນ. ຂໍ້ມູນຄ່າຈ້າງນີ້ຖືກນຳໃຊ້ເພື່ອກຳນົດຄວາມມີສິດທີ່ຈະໄດ້ຮັບເງິນຜົນປະໂຫຍດປະກັນໄພຫວ່າງງານທີ່ເປັນໄປໄດ້ຂອງທ່ານ.

ເມື່ອ "ໄລຍະໃຊ້ເປັນຖານຄິດໄລ່ຕົ້ນຕໍ" ຖືກນຳໃຊ້ ,ເງິນຜົນປະໂຫຍດຈະອີງໃສ່ຄ່າຈ້າງທີ່ໄດ້ຈ່າຍໃຫ້ໃນສີ່ໄຕມາດສຸດທ້າຍທີ່ສິ້ນສຸດລົງແລ້ວ.

# ຜົນປະໂຫຍດການປະກັນໄພຫວ່າງງານຂອງທ່ານ ຖືກກຳນົດແນວໃດ

## ເຂົ້າໃຈໄລຍະໃຊ້ເປັນຖານຄິດໄລ່ຕົ້ນຕໍຂອງທ່ານ

ຈາກຕາຕະລາງຂ້າງລຸ່ມນີ້, ທ່ານສາມາດເຫັນໄດ້ວ່າຄ່າຈ້າງທີ່ຂ້ອນຂ້າງຫລ້າສຸດຈະຖືກນຳໃຊ້ ຖ້າທ່ານຍື່ນການຂໍເງິນປະກັນໄວໃນໄຕມາດນັ້ນໆ. ຖ້າທ່ານຍື່ນການຂໍເງິນປະກັນໃນຕອນທ້າຍໄຕມາດຕາມເວລາປະຕິທິນ, ຄ່າຈ້າງທີ່ຖືກນຳໃຊ້ເພື່ອກຳນົດການຂໍເງິນປະກັນຂອງທ່ານອາດຈະບໍ່ສະແດງການເພີ່ມຂຶ້ນຫລ້າສຸດໃນລາຍໄດ້ຂອງທ່ານ.

| ຖ້າເງິນປະກັນຂອງທ່ານຜົນໃຊ້ໄດ້ໃນ: | ເງິນຜົນປະໂຫຍດຂອງທ່ານແມ່ນອີງໃສ່ຄ່າຈ້າງທີ່ໄດ້ຈ່າຍ:: ຈາກ: | ເຖິງ: |
|---|---|---|
| ມັງກອນ, ກຸມພາ ຫລືມີນາ | 1 ມັງກອນຂອງປີກາຍນີ | 31 ທັນວາຂອງປີກາຍນີ |
| ເມສາ, ພຶດສະພາ ຫລືມິຖຸນາ | 1 ເມສາຂອງປີກາຍນີ | 31 ມີນາຂອງປີກາຍນີ |
| ກໍລະກົດ, ສິງຫາ ຫລືກັນຍາ | 1 ກໍລະກົດຂອງປີກາຍນີ | 30 ມັງກອນຂອງປີນີ |
| ຕຸລາ, ພະຈິກ ຫລືທັນວາ | 1 ຕຸລາຂອງປີກາຍນີ | 30 ກັນຍາຂອງປີນີ |

## ເຂົ້າໃຈໄລຍະໃຊ້ເປັນຖານຄິດໄລ່ທາງອື່ນແທນ

ຖ້າທ່ານບໍ່ມີສິດໄດ້ຮັບການເງິນຜົນປະໂຫຍດໂດຍນຳໃຊ້ໄລຍະຖານຄິດໄລ່ຕົ້ນຕໍຂອງທ່ານ, ແລະ ຈະມີສິດໄດ້ຮັບ ຖ້າຫາກນຳໃຊ້ໄລຍະໃຊ້ທີ່ເປັນທາງເລືອກອື່ນເພື່ອຄິດໄລ່ແທນ, ພະແນກ DUA ຈະນຳໃຊ້ວິທີການນີ້ໂດຍອັດຕະໂນມັດເພື່ອກຳນົດເງິນຜົນປະໂຫຍດຂອງທ່ານ.

ເມື່ອມີການນຳໃຊ້ໄລຍະໃຊ້ເປັນຖານຄິດໄລ່ທາງອື່ນແທນ, ການຂໍເອົາເງິນປະກັນຂອງທ່ານຈະຖືກກຳນົດອີງໃສ່ຄ່າຈ້າງທີ່ຈ່າຍໃຫ້ທ່ານໃນລະຫວ່າງສາມໄຕມາດຫລ້າສຸດທີ່ສິ້ນສຸດໄປແລ້ວຕາມເວລາປະຕິທິນ, ບວກກັບເວລາລະຫວ່າງໄຕມາດສຸດທ້າຍຫາວັນທີ່ມີຜົນໃຊ້ໄດ້ຂອງການຂໍເອົາເງິນປະກັນຂອງທ່ານ. ລຸ່ມນີ້ຄືຕົວຢ່າງ:

| ຖ້າເງິນປະກັນຂອງທ່ານຜົນໃຊ້ໄດ້ໃນ:: | ເງິນຜົນປະໂຫຍດຂອງທ່ານແມ່ນອີງໃສ່ຄ່າຈ້າງທີ່ໄດ້ຈ່າຍ:: ຈາກ: | ເຖິງ: |
|---|---|---|
| 6 ພະຈິກ 2021 | 1 ມັງກອນ 2021 | 5 ພະຈິກ 2022 |
| 1 ມັງກອນ 2022 | 1 ເມສາ 2021 | 31 ເດືອນທັນວາ 2022 |
| 9 ເມສາ 2022 | 1 ກໍລະກົດ, 2021 | 8 ເມສາ 2023 |
| 9 ກໍລະກົດ 2022 | 1 ຕຸລາ 2021 | 8 ກໍລະກົດ 2023 |
| 8 ພະຈິກ 2022 | 1 ມັງກອນ 2022 | 7 ພະຈິກ 2023 |

## ໃນກໍລະນີໃດທ່ານສາມາດໃຊ້ວິທີເລືອກເອົາທາງເລືອກອື່ນເປັນຖານຄິດໄລ່

ໃນກໍລະນີພິເສດທີ່ກຳນົດຢູ່ໃນກົດໝາຍຜູ້ຂໍເງິນປະກັນສາມາດເລືອກທີ່ຈະທຳຄຳຮ້ອງຂໍເງິນຫວ່າງງານໂດຍໃຊ້ວິທີທາງອື່ນເຖິງແມ່ນວ່າພວກເຂົາເຈົ້າສາມາດມີສິດຂໍຜົນປະໂຫຍດບາງອັນພາຍໃຕ້ໄລຍະໃຊ້ເປັນຖານຄິດໄລ່ຕົ້ນຕໍກໍຕາມ.

**ທ່ານອາດສາມາດມີສິດຂໍທາງເລືອກນີ້ ພຽງແຕ່ໃນກໍລະນີທີ່ວ່າ:**

- ການຂໍເງິນຂອງທ່ານໄດ້ສ້າງຂຶ້ນໂດຍໃຊ້"ໄລຍະໃຊ້ຖານຄິດໄລ່ຕົ້ນຕໍ."
- ທ່ານສາມາດສົ່ງໃຫ້ DUA "ໃບຢືນຢັນທີ່ໜ້າເຊື່ອຖື" ເປັນລາຍລັກອັກສອນ (ເຊິ່ງສາມາດປະກອບມີ ແຕ່ບໍ່ຈຳກັດ, ການລາຍງານຄ່າຈ້າງ) ວ່າຂໍ້ມູນເງິນຜົນປະໂຫຍດທັງໝົດທີ່ຕ້ອງຈ່າຍໃຫ້ທ່ານໂດຍນຳໃຊ້ "ໄລຍະໃຊ້ເປັນທາງເລືອກອື່ນ" ແມ່ນຢ່າງໜ້ອຍ 10 ເປີເຊັນຫຼາຍກວ່າເງິນຜົນປະໂຫຍດທັງໝົດທີ່ຕ້ອງຈ່າຍໃຫ້ທ່ານໂດຍນຳໃຊ້ໄລຍະໃຊ້ເປັນຖານຕົ້ນຕໍ.

ທ່ານບໍ່ມີສິດສຳລັບທາງເລືອກນີ້ ຖ້າ:

- .ການຂໍເອົາເງິນປະກັນຂອງທ່ານໄດ້ກຳນົດໂດຍນຳໃຊ້ "ໄລຍະໃຊ້ເປັນຖານທາງເລືອກອື່ນ" ຢູ່ແລ້ວ.

## ຖ້າທ່ານບໍ່ເຫັນດີນຳຄ່າຈ້າງທີ່ຖືກແຈ້ງ

ຖ້າທ່ານບໍ່ເຫັນດີນຳຈຳນວນເງິນຄ່າຈ້າງທີ່ຖືກແຈ້ງໃຫ້ພະແນກ DUA ໂດຍພະແນກອາກອນລາຍໄດ້, ໃຫ້ໂທຫາສູນ Tele-Claim Center.

DUAຈະຂໍໃຫ້ທ່ານສະໜອງຫລັກຖານຈຳນວນລາຍໄດ້ຂອງທ່ານທີ່ທ່ານກຳລັງຂໍອຸທອນແລະຫລັງຈາກນັ້ນທ່ານຕ້ອງຂໍຂໍ້ມູນລາຍໄດ້ຂອງທ່ານຈາກນາຍຈ້າງຂອງທ່ານໂດຍຕົງ.

ຖ້າມີການຕັດສິນວ່າທ່ານບໍ່ມີລາຍໄດ້ພຽງພໍ ແມ່ນວ່າຈະຢູ່ພາຍໃຕ້ໄລຍະຖານໃຊ້ຂໍເງິນຕົ້ນຕໍ ຫລືພາຍໃຕ້ໄລຍະຖານທາງເລືອກອື່ນເພື່ອສ້າງເປັນພື້ນຖານໃນການຄິດໄລ່ຊ່ວຍເຫລືອຂອງທ່ານກໍຕາມ, ຫລືຖ້າວ່າທ່ານຍັງສືບຕໍ່ບໍ່ພໍໃຈນຳຈຳນວນເງິນລາຍໄດ້ທີ່ທ່ານໄດ້ລາຍງານໄປນັ້ນຢູ່, ທ່ານມີສິດທີ່ຈະຍື່ນຄຳອຸທອນ ແລະ ຂໍໃຫ້ມີການພິຈາລະນາຄະດີ.

ຖ້າທ່ານມີຄຳຖາມເພີ່ມເຕີມ ກະລຸນາຖາມພະນັກງານຮັບຜິດຊອບດ້ານຂໍເງິນຫວ່າງງານຂອງ DUA .